ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

INEWS ຂ່າວ

ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ສ້າງຂະບວນການອອກແຮງງານອະນາໄມ ແລະ ປູກຕົ້ນໄມ້



ໃນຕອນແລງຂອງ ວັນທີ **01** ມິຖຸນາ **2021** ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ນຳໂດຍ ທ່ານ ວິສອນ ໄຊສີງຄາມ ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ໄດ້ສ້າງຂະບວນການອອກແຮງງານອະນາໄມ, ປູກຕົ້ນໄມ້ປະດັບອ້ອມສຳນັກງານ ທຫລ.ຊຂ, ປູກຢູ່ທາງໄປສະໜາມກິລາແຂວງຊຽງຂວາງ ໃນຂອບເຂດຮັບຜິດຊອບຂອງ ທຫລ.ຊຂ ແລະ ປະກອບສ່ວນປູກຕົ້ນໄມ້ຮ່ວມກັບບັນດາການນຳແຂວງ ຢູ່ທີ່ໂຮງຮຽນການເມືອງການປົກຄອງແຂວງຊຽງຂວາງ ເພື່ອສະເຫຼີມສະຫຼອງວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນທີ່ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ໃນປີ **2021** ແລະ ເພື່ອເປັນການສ້າງສະພາບແວດລ້ອມເຂດສຳນັກງານໃຫ້ເປັນພື້ນທີ່ສີຂຽວ.

ໃນການສ້າງຂະບວນການອອກແຮງງານອະນາໄມລວມຄັ້ງນີ້ໄດ້ມີການເກັບຂີ້ເຫຍື້ອ, ຕັດຫຍ້າ, ໃສ່ຝຸ່ນຕົ້ນໄມ້, ຫົດນ້ຳ ແລະ ເຮັດຮົ້ວອ້ອມ ເພື່ອຮັບປະກັນຈາກການທຳລາຍຂອງສັດລ້ຽງ; ບັນດາພະນັກງານ ທຫ.ລ.ຊຂ ທີ່ໄດ້ເຂົ້າຮ່ວມໄດ້ພ້ອມກັນເອົາໃຈໃສ່ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ມີປະສິດທິພາບ, ມີຄວາມຮັບຜິດຊອບສູງ ແລະ ຢ່າງເປັນຂະບວນການຟົດຟື້ນ.









✍ ຂ່າວ: ສຸກສະຫວັນ ພິມມະວົງ